ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2229 /ອຄ.ຄພນ

ນະຄອນຫລວງວຽງຈັນ,ວັນທີ 10/11/2009

# ແຈ້ງການ

ເຖິງ : - ບັນດາ ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ.

- ບັນດາ ຜູ້ປະກອບການທຸລະກິດ ແລະ ຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວ ດຳເນີນທຸລະກິດ ຢູ່ ສປປ ລາວ.

ເລື່ອງ : ແຈ້ງການເພີ່ມເຕີມກ່ຽວກັບການແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍ ວິສາຫະກິດ.

ເພື່ອເພີ່ມທະວີໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 /11/ 2005 ໃຫ້ປະກົດຜົນເປັນຈິງ ແລະ ສືບຕໍ່ຈັດຕັ້ງປະຕິບັດຕາມແຈ້ງການເລກທີ 1238 / ອຄ.ຄພນ, ລົງວັນທີ 28/07/2008 ກ່ຽວກັບການປະກາດເປີດ ຮັບການແຈ້ງຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ, ຊຶ່ງໃນໄລຍະຜ່ານມາ ເຫັນວ່າບັນດາຜູ້ປະກອບການທຸລະກິດແລະຫົວໜ່ວຍວິສາຫະກິດສ່ວນຫຼາຍຍັງບໍ່ທັນໄດ້ມາແຈ້ງຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດຕາມລະບຽບການທີ່ກຳນົດໄວ້ ຕໍ່ບັນຫາດັ່ງກ່າວແມ່ນເຮັດໃຫ້ ຂະແໜງອຸດສາຫະກຳ ແລະ ການຄ້າ ບໍ່ສາມາດສົ່ງເສີມ, ຄຸ້ມຄອງ,ຕິດຕາມ, ກວດກາ, ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ເກັບກຳສັງລວມຂໍ້ມູນ ເຂົ້າສູ່ລະບົບຖານຂໍ້ມູນແຫ່ງຊາດ(National Database)ກ່ຽວກັບຫົວໜ່ວຍວິສາຫະກິດຢູ່ໃນຂອບເຂດທົ່ວປະເທດໄດ້ດີເທົ່າທີ່ຄວນ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳແລະການຄ້າ ຖືເປັນກຽດແຈ້ງມາຍັງທ່ານ ດັ່ງນີ້:

1. ບັນດາຫົວໜ່ວຍວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍທຸລະກິດທີ່ຂັ້ນກະຊວງ, ຂັ້ນພະແນກ ແລະ ຫ້ອງການອຸດສາຫະກຳ - ການຄ້າຂັ້ນເມືອງ ໃນຂອບເຂດທົ່ວປະເທດ ອອກ ໃຫ້ໃນເມື່ອກ່ອນໃຫ້ຮີບຮ້ອນ ມາແຈ້ງຂຶ້ນ ເພື່ອປັບປຸງໂຄງປະກອບຂອງວິສາຫະກິດຄືນໃໝ່ ໃຫ້ສອດຄ່ອງຕາມປະເພດ, ຮູບການ,ຮູບແບບຂອງວິສາຫະກິດ, ດັດແກ້, ປ່ຽນແປງໃບທະບຽນວິສາຫະກິດ ຄືນໃໝ່ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດ, ສ່ວນແບບຟອມຄຳຮ້ອງໃຫ້ພົວພັນເອົານຳບັນດາຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ.

ສຳລັບບຸກຄົນຫຼືນິຕິບຸກຄົນຫລືຫົວໜ່ວຍທຸລະກິດໃດທີ່ມີການເຄື່ອນໄຫວດຳເນີນທຸລະກິດຢູ່ສປປລາວ ຖ້າບໍ່ມາແຈ້ງຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດ ແລະ ຍັງສືບຕໍ່ເຄື່ອນໄຫວດຳເນີນທຸລະກິດຖືວ່າເປັນການເຄື່ອນໄຫວດຳເນີນທຸລະກິດທີ່ຝ່າຝືນ,ຂັດກັບລະບຽບກົດໝາຍ,ໃນໄລຍະ 01ປີຜ່ານມາກໍ່ໄດ້ແຈ້ງແນະນຳຕັກເຕືອນຮັບຊາບທົ່ວເຖິງກັນແລ້ວ, ແຕ່ຖ້າຫາກຍັງບໍ່ປະຕິບັດເລີ່ມແຕ່ ເດືອນມີນາ (3) 2010 ເປັນຕົ້ນໄປຈະ ຖືກ

ໄດ້ເລີ່ມຈັດຕັ້ງປະຕິບັດມາດຕະການທາງດ້ານເສດຖະກິດແລະປັບໃໝເປັນແຕ່ລະກໍລະນີນັບແຕ່1.000.000 ກີບ ຫາ 10.000.000 ກີບ ຕາມທີ່ກຳນົດໄວ້ໃນ ມາດຕາ 236 ຂອງກົດໝາຍວ່າດ້ວຍວິສາຫະກິດ.

2. ບຸກຄົນ ຫຼື ນິຕິບຸກຄົນໃດໄດ້ຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ ແລ້ວຕ້ອງຂຶ້ນທະບຽນອາກອນນຳຂະແໜງການເງິນຕາມລະບຽບການ ແລະ ຂຶ້ນປ້າຍວິສາຫະກິດໃຫ້ສຳ ເລັດພາຍໃນກຳນົດ 20 ວັນ, ຊຶ່ງເນື້ອໃນຂອງ ປ້າຍໃຫ້ຖືກຕ້ອງຕາມໃບທະບຽນວິສາຫະກິດເຊັ່ນ: ຊື່ວິສາ ຫະກິດ, ເລກລຳດັບຜູ້ຖືທະບຽນ, ເລກທີໃບທະບຽນ, ທີ່ຕັ້ງຂອງວິສາຫະກິດ ແລະເບີໂທລະສັບ,ແຟກ ຫຼື ອີເມລ(ຖ້າມີ). ສຳລັບສີຂອງປ້າຍວິສາຫະກິດເອກະຊົນ ຕ້ອງເປັນພື້ນສີເຫຼືອງ ແລະ ຕົວໜັງສືສີແດງ, ວິສາຫະກິດຂອງລັດທີ່ສ້າງຕັ້ງເປັນ ບໍລິສັດລັດ ແລະ ບໍລິສັດປະສົມຕ້ອງເປັນພື້ນສີຂາວຕົວໜັງສື ສີແດງ, ສ່ວນຂະໜາດຂອງປ້າຍຕ້ອງມີຂະໜາດທີ່ເໝາະສົມ ແລະ ຕິດໄວ້ດ້ານໜ້າສຳນັກງານຂອງວິສາຫະກິດ ເພື່ອໃຫ້ສາທາລະນະຊົນຮັບຊາບ ແລະ ເພື່ອເປັນເງື່ອນໄຂສະດວກໃຫ້ແກ່ການຕິດຕາມ, ສົ່ງເສີມ, ກວດກາ ຂອງບັນດາເຈົ້າໜ້າທີ່ງກ່ຽວຂ້ອງ ຖ້າຫົວໜ່ວຍວິສາຫະກິດໃດບໍ່ປະຕິບັດຫຼື ຂຶ້ນປ້າຍ ແລະ ໃຊ້ຊື່ວິສາຫະກິດ ບໍ່ຖືກຕ້ອງຕາມໃບທະບຽນວິສາຫະກິດ ຕົນຈະຖືກແນະນຳຕັກເຕືອນ ຫຼື ປັບໃໝ 200.000 ກີບ/ຄັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 240 ຂອງກົດໝາຍວ່າດ້ວຍວິສາຫະກິດ.

3. ຫົວໜ່ວຍວິສາຫະກິດໃດໃສ່ຊື່ວິສາຫະກິດທີ່ເກືອດຫ້າມ ແລະ ບໍ່ປົດປ້າຍຊື່ວິສາຫະກິດພາຍຫຼັງທີ່ວິສາຫະກິດຖືກຍຸບເລີກແລ້ວຈະຖືກແນະນຳຕັກເຕືອນ ຫຼື ປັບໃໝແຕ່ 300.000 ກີບ ຫາ 500.000 ກີບ ພ້ອມທັງໃຫ້ຢຸດເຊົາການໃສ່ຊື່ວິສາຫະກິດນັ້ນ ແລະ ໃຫ້ປົດປ້າຍອອກຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 241 ແລະ 242 ຂອງກົດໝາຍວ່າດ້ວຍວິສາຫະກິດ.

4. ການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ປະຕິບັດດັ່ງນີ້:

- ມອບໃຫ້ກົມການຄ້າພາຍໃນຊີ້ນຳ,ກວດກາແລະປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ,ນະຄອນຫລວງ ແລະ ຫ້ອງການອຸດສາຫະກຳແລະການຄ້າເມືອງ ໃນຂອບເຂດທົ່ວປະເທດ;

- ພະແນກອຸດສາຫະກຳແລະການຄ້າ ແຂວງ, ນະຄອນຫຼວງ ຊີ້ນຳກວດກາການຈັດຕັ້ງປະຕິບັດຂອງຫ້ອງການເຈົ້າໜ້າທີ່ກວດກາການຄ້າ, ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ ຫ້ອງການອຸດສາຫະກຳແລະການຄ້າ ຂັ້ນເມືອງ ໃນຂອບເຂດ ທົ່ວປະເທດ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

- ຂະແໜງການ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງ ຈົ່ງໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຕາມລະບຽບກົດໝາຍກຳນົດໄວ້.

5. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ຊຽວສະຫວາດ ສະແຫວງສຶກສາ

ບ່ອນນຳສົ່ງ:
- ຫ້ອງວ່າການສູນກາງພັກ "ເພື່ອລາຍງານ"
- ຄະນະເລຂາທິການລັດຖະບານ "ເພື່ອລາຍງານ"
- ບັນດາກະຊວງກ່ຽວຂ້ອງ "ເພື່ອຊາບ"
- ບັນດາກົມອ້ອມຂ້າງກະຊວງ "ເພື່ອຊາບ"
- ພະແນກ ອຄ ແຂວງ ,ນະຄອນຫຼວງ,ບັນດາຫ້ອງການ ອຄ ເມືອງ ໃນຂອບເຂດທົ່ວປະເທດ"ເພື່ອຈັດຕັ້ງປະຕິບັດ"
- ສະມາຄົມ, ກຸ່ມທຸລະກິດ "ເພື່ອໃຫ້ຄວາມຮ່ວມມື"
- ສຳເນົາ.